Washington State Health Care Authority

# Notice of Privacy Practices (ແຈ້ງການກ່ຽວກັບແນວທາງປະຕິບັດສຳລັບຄວາມເປັນສ່ວນຕົວ)

ມີຜົນບັງຄັບໃຊ້ໃນ ເດືອນມັງກອນ ປີ 2024

*ແຈ້ງການສະບັບນີ້ ອະທິບາຍເຖິງວິທີການນຳໃຊ້ ຫຼື ເປີດເຜີຍຂໍ້ມູນທາງການແພດກ່ຽວກັບທ່ານຂອງ Health Care Authority (ອົງການການເບິ່ງແຍງດູແລສຸຂະພາບ, HCA, ພວກເຮົາ ຫຼື ເຮົາ) ແຫ່ງລັດ Washington ແລະ ວິທີທີ່ທ່ານສາມາດເຂົ້າເຖິງຂໍ້ມູນນີ້ໄດ້. ກະລຸນາອ່ານເບິ່ງຢ່າງລະອຽດ.*

**ເປັນຫຍັງຂ້າພະເຈົ້າຈຶ່ງໄດ້ຮັບແຈ້ງການສະບັບນີ້?**

HCA ມຸ່ງໝັ້ນທີ່ຈະປົກປ້ອງຂໍ້ມູນສຸຂະພາບຂອງທ່ານ. ກົດໝາຍກຳນົດໃຫ້ພວກເຮົາຕ້ອງໃຫ້ແຈ້ງການສະບັບນີ້ໃຫ້ແກ່ບັນດາສະມາຊິກໝົດທຸກຄົນ ເພື່ອໃຫ້ທ່ານຮູ້ວ່າ ພວກເຮົາອາດຈະນຳໃຊ້ ຫຼື ເປີດເຜີຍຂໍ້ມູນຂອງທ່ານຄືແນວໃດ. ແຈ້ງການສະບັບນີ້ບໍ່ມີຜົນກະທົບຕໍ່ກັບການມີສິດໄດ້ຮັບການບໍລິການ ຫຼື ການຄຸ້ມຄອງຂອງທ່ານ. ຖ້າທ່ານມີຄຳຖາມໃດໆກ່ຽວກັບການແຈ້ງການສະບັບນີ້, ກະລຸນາຕິດຕໍ່ຫາຫ້ອງການຄວາມເປັນສ່ວນຕົວ ຂອງ HCA ໂດຍການສົ່ງອີເມວຫາ PrivacyOfficer@hca.wa.gov, ໂທຫາ 1-844-284-2149 ຫຼື ຂຽນໜັງສືຫາ HCA Privacy Officer (ເຈົ້າໜ້າທີ່ດູແລຄວາມເປັນສ່ວນຕົວ), Health Care Authority (ອົງການການເບິ່ງແຍງດູແລສຸຂະພາບ), P.O. Box 42704, Olympia, WA 98504-2704.

**ສະຫຼຸບສັງລວມ**

## 1 ສິດຂອງທ່ານ

**ທ່ານມີສິດທີ່ຈະ:**
- ໄດ້ຮັບສຳເນົາຂອງບັນທຶກສຸຂະພາບ ແລະ ການຮຽກທວງຂອງທ່ານ.
- ແກ້ໄຂບັນທຶກສຸຂະພາບ ແລະ ການຮຽກທວງຂອງທ່ານໃຫ້ຖືກຕ້ອງ.
- ຮ້ອງຂໍການຕິດຕໍ່ສື່ສານເປັນຄວາມລັບ.
- ຂໍໃຫ້ພວກເຮົາຈຳກັດຂໍ້ມູນທີ່ພວກເຮົາແບ່ງປັນ.
- ໄດ້ຮັບບັນຊີລາຍຊື່ (ໂດຍມີຂໍ້ຍົກເວັ້ນບາງປະການ) ຂອງຜູ້ທີ່ພວກເຮົາໄດ້ແບ່ງປັນຂໍ້ມູນຂອງທ່ານໃຫ້.
- ໄດ້ຮັບສຳເນົາຂອງແຈ້ງການກ່ຽວກັບຄວາມເປັນສ່ວນຕົວສະບັບນີ້.
- ເລືອກບຸກຄົນໃດໜຶ່ງມາດຳເນີນການແທນທ່ານ.
- ຍື່ນຄຳຮ້ອງຮຽນ ຖ້າທ່ານເຊື່ອວ່າມີການລະເມີດສິດຄວາມເປັນສ່ວນຕົວຂອງທ່ານ.

➢ ***ໄປທີ່ໜ້າ 2 ສຳລັບຂໍ້ມູນເພີ່ມຕື່ມ***

## 2 ທາງເລືອກຂອງທ່ານ

**ທ່ານສາມາດບອກພວກເຮົາເຖິງທາງເລືອກຂອງທ່ານກ່ຽວກັບຂໍ້ມູນສຸຂະພາບບາງຢ່າງທີ່ພວກເຮົານຳໃຊ້ ຫຼື ແບ່ງປັນ. ຕົວຢ່າງ: ວິທີທີ່ພວກເຮົາຈະ:**
- ຕອບຄຳຖາມກ່ຽວກັບການຄຸ້ມຄອງຈາກຄອບຄົວ ແລະ ໝູ່ເພື່ອນຂອງທ່ານ.
- ໃຫ້ການບັນເທົາທຸກໄພພິບັດ.

ພວກເຮົາບໍ່ໄດ້ເຮັດຕະຫຼາດແກ່ການບໍລິການຂອງພວກເຮົາ ຫຼື ຂາຍຂໍ້ມູນຂອງທ່ານ.

➢ ***ໄປທີ່ໜ້າ 3 ສຳລັບຂໍ້ມູນເພີ່ມຕື່ມ***

## 3 ການນຳໃຊ້ ແລະ ການເປີດເຜີຍຂອງພວກເຮົາ

**ພວກເຮົາອາດຈະນຳໃຊ້ ແລະ ແບ່ງປັນຂໍ້ມູນຂອງທ່ານ ສຳລັບເຫດຜົນເຫຼົ່ານີ້:**
- ຊ່ວຍຈັດການການປິ່ນປົວເບິ່ງແຍງດູແລສຸຂະພາບທີ່ທ່ານໄດ້ຮັບ.
- ບໍລິຫານອົງກອນຂອງພວກເຮົາ.
- ຈ່າຍຄ່າບໍລິການສຸຂະພາບຂອງທ່ານ.
- ບໍລິຫານແຜນສຸຂະພາບຂອງທ່ານ.
- ຊ່ວຍໃນເລື່ອງບັນຫາສຸຂະພາບ ແລະ ສາທາລະນະສຸກ.
- ເຮັດການຄົ້ນຄວ້າວິໄຈ.
- ປະຕິບັດຕາມກົດໝາຍ.
- ຕອບສະໜອງຕໍ່ການຮ້ອງຂໍບໍລິຈາກອະໄວຍະວະ ແລະ ເນື້ອເຍື່ອ ແລະ ເຮັດວຽກຮ່ວມກັບຜູ້ກວດສອບທາງການແພດ ຫຼື ຜູ້ອຳນວຍການຈັດງານສົບ.
- ແກ້ໄຂຄ່າຊົດເຊີຍຜູ້ອອກແຮງງານ, ການບັງຄັບໃຊ້ກົດໝາຍ ແລະ ຄຳຮ້ອງຂໍຂອງລັດຖະບານອື່ນໆ.
- ຕອບສະໜອງຕໍ່ການດຳເນີນຄະດີ ແລະ ການດຳເນີນການທາງກົດໝາຍ.
- ລະບຸໂອກາດໃນການປັບປຸງຄຸນນະພາບ.

➢ ***ໄປທີ່ໜ້າ 4 ສຳລັບຂໍ້ມູນເພີ່ມຕື່ມ***

**ເມື່ອເວົ້າເຖິງຂໍ້ມູນສຸຂະພາບຂອງທ່ານ, ທ່ານຈະມີສິດຈຳນວນໜຶ່ງ.** ພາກນີ້ອະທິບາຍເຖິງສິດຂອງທ່ານ ແລະ ຄວາມຮັບຜິດຊອບບາງປະການຂອງພວກເຮົາທີ່ຈະຊ່ວຍທ່ານ. ຖ້າທ່ານຢາກຈະນຳໃຊ້ສິດຂອງທ່ານ ຫຼື ມີຄຳຖາມໃດໆກ່ຽວກັບຂໍ້ມູນສຸຂະພາບຂອງທ່ານທີ່ HCA ຖືຄອງ, ກະລຸນາຕິດຕໍ່ຫາຫ້ອງການຄວາມເປັນສ່ວນຕົວ ຂອງ HCA ໂດຍການສົ່ງອີເມວຫາ **PrivacyOfficer@hca.wa.gov**, ໂທຫາ 1-844-284-2149 ຫຼື ຂຽນໜັງສືຫາ HCA Privacy Officer (ເຈົ້າໜ້າທີ່ດູແລຄວາມເປັນສ່ວນຕົວ), Health Care Authority (ອົງການການເບິ່ງແຍງດູແລສຸຂະພາບ), P.O. Box 42704, Olympia, WA 98504-2704.

## ທ່ານມີສິດທີ່ຈະ:

### ໄດ້ຮັບສຳເນົາຂອງບັນທຶກສຸຂະພາບ ແລະ ການຮຽກທວງຂອງທ່ານ

ທ່ານສາມາດຈະກວດເບິ່ງຂໍ້ມູນສ່ວນຕົວທີ່ HCA ມີກ່ຽວກັບທ່ານ ໂດຍການຖາມ, ຂຽນໜັງສືເປັນລາຍລັກອັກສອນ ເພື່ອຂໍເຂົ້າເຖິງຂໍ້ມູນ ຫຼື ສຳເນົາຂອງຂໍ້ມູນ. ພວກເຮົາອາດຈະເກັບຄ່າທຳນຽມສຳລັບການສຳເນົາ. ໃນຫຼາຍສະຖານະການ, ພວກເຮົາຈະໃຫ້ສຳເນົາໃນຮູບແບບເອເລັກໂຕນິກ ຕາມການຮ້ອງຂໍ.

ນອກຈາກຂໍ້ຍົກເວັ້ນທີ່ໄດ້ລະບຸໄວ້ຂ້າງລຸ່ມນີ້ແລ້ວ, ນີ້ແມ່ນບັນທຶກທີ່ທ່ານອາດສາມາດກວດເບິ່ງ ແລະ ສຳເນົາໄດ້:

- ການລົງທະບຽນ, ການຈ່າຍເງິນ, ການພິຈາລະນາການຮຽກທວງ ແລະ ບັນທຶກຄະດີ ຫຼື ການຄຸ້ມຄອງທາງການແພດ ທີ່ເກັບຮັກສາໄວ້ໂດຍ ຫຼື ເກັບໄວ້ໃຫ້ HCA.
- ບັນທຶກອື່ນໆ ທີ່ HCA ນຳໃຊ້ເພື່ອຕັດສິນໃຈກ່ຽວກັບທ່ານ.

ຂໍ້ມູນທີ່ທ່ານອາດຈະສາມາດກວດເບິ່ງ ແລະ ສຳເນົາ ບໍ່ລວມທັງ:

- ບັນທຶກຈິດບຳບັດ.
- ຂໍ້ມູນທີ່ລວບລວມໂດຍການຄາດຄະເນທີ່ສົມເຫດສົມຜົນ ຫຼື ສຳລັບການນຳໃຊ້ໃນ, ການດຳເນີນການທາງແພ່ງ, ອາຍາ ຫຼື ທາງບໍລິຫານ ຫຼື ການດຳເນີນຄະດີ.
- ຂໍ້ມູນທີ່ HCA ບໍ່ສາມາດເປີດເຜີຍໃຫ້ທ່ານໄດ້ຕາມກົດໝາຍ.
- ຂໍ້ມູນທີ່ໄດ້ຮັບຈາກບຸກຄົນໃດໜຶ່ງທີ່ບໍ່ແມ່ນຜູ້ໃຫ້ບໍລິການເບິ່ງແຍງດູແລສຸຂະພາບພາຍໃຕ້ຄຳສັນຍາວ່າຈະຮັກສາເປັນຄວາມລັບ ຖ້າການເຂົ້າເຖິງທີ່ຮ້ອງຂໍມີແນວໂນ້ມທີ່ຈະເປີດເຜີຍແຫຼ່ງທີ່ມາຂອງຂໍ້ມູນຢ່າງສົມເຫດສົມຜົນ.
- ຂໍ້ມູນທີ່ຜູ້ຊ່ຽວຊານດ້ານການເບິ່ງດູແລສຸຂະພາບທີ່ມີໃບອະນຸຍາດ ຫຼື HCA ຕັດສິນວ່າບໍ່ຄວນຖືກເປີດເຜີຍໃຫ້ແກ່ທ່ານຮູ້ ເພາະວ່າມັນອາດຈະທຳຮ້າຍທ່ານ ຫຼື ບຸກຄົນອື່ນ.

### ຂໍໃຫ້ພວກເຮົາແກ້ໄຂບັນທຶກສຸຂະພາບ ແລະ ການຮຽກທວງໃຫ້ຖືກຕ້ອງ

- ທ່ານອາດຈະສາມາດຂໍໃຫ້ພວກເຮົາແກ້ໄຂຂໍ້ມູນສ່ວນຕົວຂອງທ່ານໄດ້ ຖ້າທ່ານເຊື່ອວ່າມັນບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນ. ທ່ານຕ້ອງຮ້ອງຂໍເປັນລາຍລັກອັກສອນ, ໂດຍໃຫ້ລະບຸຂໍ້ມູນທີ່ທ່ານຕ້ອງການປ່ຽນແປງ ແລະ ອະທິບາຍວ່າຍ້ອນຫຍັງຈຶ່ງຄວນຈະປ່ຽນແປງ.
- HCA ບໍ່ຈຳເປັນຕ້ອງເຮັດການປ່ຽນແປງທີ່ທ່ານຮ້ອງຂໍ. ຕົວຢ່າງ: HCA ບໍ່ຈຳເປັນຕ້ອງປ່ຽນແປງຂໍ້ມູນທີ່ຕົນບໍ່ໄດ້ສ້າງຂຶ້ນ ຫຼື ຂໍ້ມູນທີ່ຖືກຕ້ອງຢູ່ແລ້ວ. ຖ້າ HCA ບໍ່ເຮັດການປ່ຽນແປງທີ່ທ່ານຮ້ອງຂໍ, ກໍຈະແຈ້ງບອກທ່ານວ່າຍ້ອນຫຍັງ. ຖ້າ HCA ເຮັດການປ່ຽນແປງ, ກໍຈະໃຊ້ຄວາມພະຍາຍາມຢ່າງສົມເຫດສົມຜົນທີ່ຈະແຈ້ງໃຫ້ບຸກຄົນອື່ນທີ່ຕົນໄດ້ໃຫ້ຂໍ້ມູນໃຫ້ ຫຼື ບຸກຄົນອື່ນທີ່ທ່ານແຈ້ງບອກ HCA ວ່າໄດ້ຮັບຂໍ້ມູນຮັບຊາບ.

### ຮ້ອງຂໍການຕິດຕໍ່ສື່ສານເປັນຄວາມລັບ

- ທ່ານສາມາດຂໍໃຫ້ພວກເຮົາຕິດຕໍ່ທ່ານໄປໃນຊ່ອງທາງສະເພາະ (ຕົວຢ່າງ: ໂທລະສັບບ້ານ ຫຼື ຫ້ອງການ) ຫຼື ໃຫ້ສົ່ງອີເມວໄປຫາທີ່ຢູ່ອື່ນ.
- ພວກເຮົາຈະພິຈາລະນາຄຳຮ້ອງຂໍທີ່ສົມເຫດສົມຜົນທັງໝົດ ແລະ ຕ້ອງເວົ້າວ່າ "ແມ່ນ" ຖ້າທ່ານບອກພວກເຮົາວ່າທ່ານຈະຕົກຢູ່ໃນອັນຕະລາຍ ຖ້າພວກເຮົາບໍ່ເຮັດ.

### ຮ້ອງຂໍຂໍ້ຈຳກັດ (ການເປີດເຜີຍແບບຈຳກັດ)

- ທ່ານສາມາດຂໍບໍ່ໃຫ້ພວກເຮົານຳໃຊ້ ຫຼື ແບ່ງປັນຂໍ້ມູນສຸຂະພາບບາງຢ່າງ ສຳລັບການປິ່ນປົວ, ການຈ່າຍເງິນ ຫຼື ການດຳເນີນງານຂອງພວກເຮົາ.
- ພວກເຮົາບໍ່ຈຳເປັນຕ້ອງຕົກລົງເຫັນດີກັບຄຳຮ້ອງຂໍຂອງທ່ານ ແລະ ພວກເຮົາອາດຈະສາມາດເວົ້າວ່າ "ບໍ່" ໄດ້ ຖ້າມັນຈະສົ່ງຜົນກະທົບຕໍ່ການເບິ່ງແຍງດູແລຂອງທ່ານ.

**ໄດ້ຮັບບັນຊີລາຍຊື່ຂອງຜູ້ທີ່ພວກເຮົາໄດ້ແບ່ງປັນຂໍ້ມູນຂອງທ່ານໃຫ້**
ທ່ານອາດຈະສາມາດຮ້ອງຂໍບັນຊີລາຍຊື່ຂອງໜ່ວຍງານທີ່ HCA ໄດ້ເປີດເຜີຍຂໍ້ມູນຂອງທ່ານໃຫ້ໄດ້. ບັນຊີລາຍຊື່ດັ່ງກ່າວຈະບໍ່ລະບຸການເປີດເຜີຍທັງໝົດ. ຕົວຢ່າງ: ບັນຊີລາຍຊື່ ຈະບໍ່ລະບຸ:

- ການເປີດເຜີຍສຳລັບການປິ່ນປົວ, ການຈ່າຍເງິນ ແລະ ການດຳເນີນງານດ້ານການເບິ່ງແຍງດູແລສຸຂະພາບ.
- ການເປີດເຜີຍໃຫ້ແກ່ທ່ານ ຫຼື ດ້ວຍການອະນຸຍາດຂອງທ່ານ.
- ການເປີດເຜີຍທີ່ໄດ້ເປີດເຜີຍໄປແລ້ວຫຼາຍກວ່າຫົກປີກ່ອນຄຳຮ້ອງຂໍຂອງທ່ານ.

HCA ຈະຕອບທ່ານພາຍໃນ 60 ວັນ ຫຼັງຈາກຄຳຮ້ອງຂໍຂອງທ່ານ. ຖ້າທ່ານຮ້ອງຂໍຫຼາຍກວ່າໜຶ່ງບັນຊີໃນໄລຍະ 12 ເດືອນໃດໜຶ່ງ, HCA ອາດຈະຮຽກເກັບຄ່າທຳນຽມທີ່ສົມເຫດສົມຜົນ.

**ໄດ້ຮັບສຳເນົາຂອງແຈ້ງການກ່ຽວກັບຄວາມເປັນສ່ວນຕົວສະບັບນີ້**

- ທ່ານສາມາດຂໍສຳເນົາແບບເປັນເຈ້ຍເອກະສານຂອງແຈ້ງການສະບັບນີ້ໄດ້ທຸກເວລາ, ເຖິງແມ່ນວ່າທ່ານໄດ້ຕົກລົງເຫັນດີຮັບແຈ້ງການທາງເອເລັກໂຕນິກແລ້ວກໍຕາມ. ພວກເຮົາຈະໃຫ້ສຳເນົາແບບເປັນເອກະສານໃຫ້ທ່ານໃນທັນທີ.

**ເລືອກບຸກຄົນໃດໜຶ່ງມາດຳເນີນການແທນທ່ານ**

- ຖ້າທ່ານໄດ້ໃຫ້ໃບມອບສິດທາງການແພດໃຫ້ແກ່ບຸກຄົນໃດໜຶ່ງ ຫຼື ຖ້າບຸກຄົນໃດໜຶ່ງເປັນຜູ້ປົກຄອງຕາມກົດໝາຍຂອງທ່ານ, ບຸກຄົນນັ້ນຈະສາມາດນຳໃຊ້ສິດຂອງທ່ານ ແລະ ດຳເນີນການເລືອກຂໍ້ມູນສຸຂະພາບຂອງທ່ານໄດ້.
- ພວກເຮົາຈະເຮັດໃຫ້ແນ່ໃຈວ່າ ບຸກຄົນນັ້ນໄດ້ຮັບສິດອຳນາດນີ້ ແລະ ສາມາດດຳເນີນການແທນທ່ານໄດ້ ກ່ອນທີ່ພວກເຮົາຈະດຳເນີນການໃດໜຶ່ງ.

**ຍື່ນຄຳຮ້ອງຮຽນ ຖ້າທ່ານຮູ້ສຶກວ່າມີການລະເມີດສິດທີ່ຂອງທ່ານ**
ຖ້າທ່ານເຊື່ອວ່າ ສິດຄວາມເປັນສ່ວນຕົວຂອງທ່ານຖືກລະເມີດ ຫຼື ທ່ານມີຄຳຖາມ:

- ຕິດຕໍ່ຫາຫ້ອງການຄວາມເປັນສ່ວນຕົວ ຂອງ HCA ໂດຍການສົ່ງອີເມວຫາ **PrivacyOfficer@hca.wa.gov**, ໂທຫາ 1-844-284-2149 ຫຼື ຂຽນໜັງສືຫາ HCA Privacy Officer (ເຈົ້າໜ້າທີ່ດູແລຄວາມເປັນສ່ວນຕົວ), Health Care Authority (ອົງການການເບິ່ງແຍງດູແລສຸຂະພາບ), P.O. Box 42704, Olympia, WA 98504-2704; ຫຼື
- ທ່ານສາມາດຍື່ນຄຳຮ້ອງຮຽນຕໍ່ U.S. Department of Health and Human Services Office for Civil Rights (ສຳນັກງານສິດທິພົນລະເຮືອນ ຂອງ ກະຊວງສາທາລະນະສຸກແຫ່ງສະຫະລັດ) ໄດ້ ໂດຍການສົ່ງໜັງສືໄປຍັງ 200 Independence Avenue, S.W., Washington, D.C. 20201, ໂທຫາ 1-877-696-6775 ຫຼື ເຂົ້າໄປທີ່ **www.hhs.gov/ocr/privacy/hipaa/complaints/**.
- ພວກເຮົາຈະບໍ່ແກ້ແຄ້ນຕໍ່ທ່ານ ສຳລັບການຍື່ນຄຳຮ້ອງຮຽນ.

## 5 ທາງເລືອກຂອງທ່ານ

**ສຳລັບຂໍ້ມູນສຸຂະພາບບາງຢ່າງ, ທ່ານສາມາດບອກພວກເຮົາເຖິງທາງເລືອກຂອງທ່ານກ່ຽວກັບສິ່ງທີ່ພວກເຮົາຈະແບ່ງປັນໄດ້.** ຖ້າທ່ານມີຄວາມຕ້ອງການທີ່ຊັດເຈນກ່ຽວກັບວິທີການແບ່ງປັນຂໍ້ມູນຂອງທ່ານຂອງພວກເຮົາ ໃນສະຖານະການຕ່າງໆທີ່ໄດ້ອະທິບາຍໄວ້ຂ້າງລຸ່ມນີ້, ໃຫ້ລົມກັບພວກເຮົາໄດ້. ບອກພວກເຮົາເຖິງສິ່ງທີ່ທ່ານຢາກຈະໃຫ້ພວກເຮົາເຮັດ ແລະ ພວກເຮົາຈະປະຕິບັດຕາມຄຳແນະນຳຂອງທ່ານ.

**ໃນກໍລະນີເຫຼົ່ານີ້, ທ່ານມີທັງສິດ ແລະ ທາງເລືອກທີ່ຈະບອກພວກເຮົາໃຫ້:**

- ແບ່ງປັນຂໍ້ມູນກັບຄອບຄົວຂອງທ່ານ, ໝູ່ເພື່ອນສະໜິດ ຫຼື ບຸກຄົນອື່ນທີ່ມີສ່ວນກ່ຽວຂ້ອງກັບການຈ່າຍຄ່າການເບິ່ງແຍງດູແລຂອງທ່ານ.
- ແບ່ງປັນຂໍ້ມູນໃນສະຖານະການບັນເທົາໄພພິບັດ.

*ຖ້າທ່ານບໍ່ສາມາດບອກພວກເຮົາເຖິງຄວາມຕ້ອງການຂອງທ່ານໄດ້, ຕົວຢ່າງ: ຖ້າທ່ານໝົດສະຕິ, ພວກເຮົາອາດຈະເດີນໜ້າຕໍ່ ແລະ ແບ່ງປັນຂໍ້ມູນຂອງທ່ານ ຖ້າພວກເຮົາເຊື່ອວ່າຈະເປັນປະໂຫຍດທີ່ສຸດຕໍ່ທ່ານ. ນອກຈາກນັ້ນ, ພວກເຮົາກໍຍັງອາດຈະແບ່ງປັນຂໍ້ມູນຂອງທ່ານອີກດ້ວຍ ໃນເວລາທີ່ມີຄວາມຈຳເປັນເພື່ອຫຼຸດຜ່ອນໄພຂົ່ມຂູ່ທີ່ຮ້າຍແຮງ ແລະ ໃກ້ຈະເກີດຂຶ້ນຕໍ່ສຸຂະພາບ ຫຼື ຄວາມປອດໄພ.*

**ໂດຍປົກກະຕິແລ້ວ, ພວກເຮົານຳໃຊ້ ຫຼື ແບ່ງປັນຂໍ້ມູນສຸຂະພາບຂອງທ່ານຄືແນວໃດ?** ໂດຍປົກກະຕິແລ້ວ, ພວກເຮົານຳໃຊ້ ຫຼື ແບ່ງປັນຂໍ້ມູນສຸຂະພາບຂອງທ່ານໃນຊ່ອງທາງຕ່າງໆຕໍ່ໄປນີ້.

**ຊ່ວຍຈັດການການປິ່ນປົວເບິ່ງແຍງດູແລສຸຂະພາບທີ່ທ່ານໄດ້ຮັບ**

ການຊ່ວຍນີ້ລວມທັງການເບິ່ງແຍງດູແລທີ່ສະໜອງໃຫ້ທ່ານ ແລະ ການປະສານງານ ຫຼື ການຄຸ້ມຄອງການເບິ່ງແຍງດູແລຂອງທ່ານ. ຕົວຢ່າງ: HCA ອາດຈະເປີດເຜີຍຂໍ້ມູນເພື່ອແຈ້ງເຕືອນໃຫ້ຜູ້ໃຫ້ບໍລິການດ້ານການເບິ່ງແຍງດູແລສຸຂະພາບຂອງທ່ານເຖິງບັນຫາທີ່ເປັນໄປໄດ້ໃນການເບິ່ງແຍງດູແລຂອງທ່ານ.

**ບໍລິຫານອົງກອນຂອງພວກເຮົາ**

- ພວກເຮົາສາມາດນຳໃຊ້ ແລະ ເປີດເຜີຍຂໍ້ມູນຂອງທ່ານ ເພື່ອບໍລິຫານອົງກອນຂອງພວກເຮົາ ແລະ ຕິດຕໍ່ຫາທ່ານໃນເວລາທີ່ຈຳເປັນ.
- ພວກເຮົາບໍ່ໄດ້ຮັບອະນຸຍາດໃຫ້ນຳໃຊ້ຂໍ້ມູນພັນທຸກຳເພື່ອຕັດສິນໃຈວ່າພວກເຮົາຈະໃຫ້ການຄຸ້ມຄອງ ແລະ ລາຄາຂອງການຄຸ້ມຄອງນັ້ນໃຫ້ແກ່ທ່ານ ຫຼື ບໍ່. ການຄຸ້ມຄອງນີ້ບໍ່ມີຜົນບັງຄັບໃຊ້ກັບແຜນ long term care (ການເບິ່ງແຍງດູແລໄລຍະຍາວ).

***ຕົວຢ່າງ:*** *ພວກເຮົານຳໃຊ້ຂໍ້ມູນສຸຂະພາບກ່ຽວກັບທ່ານ ເພື່ອພັດທະນາການບໍລິການທີ່ດີຍິ່ງຂຶ້ນໃຫ້ແກ່ທ່ານ.*

**ຈ່າຍຄ່າບໍລິການສຸຂະພາບຂອງທ່ານ**

- ພວກເຮົາສາມາດນຳໃຊ້ ແລະ ເປີດເຜີຍຂໍ້ມູນສຸຂະພາບຂອງທ່ານໄດ້ ເມື່ອພວກເຮົາຈ່າຍຄ່າບໍລິການສຸຂະພາບທີ່ໄດ້ຮັບການຄຸ້ມຄອງຂອງທ່ານ.

***ຕົວຢ່າງ:*** *ພວກເຮົາອາດຈະແບ່ງປັນຂໍ້ມູນກ່ຽວກັບທ່ານໃຫ້ແກ່ທ່ານໝໍຂອງທ່ານ ເພື່ອປະສານງານກ່ຽວກັບການຈ່າຍຄ່າຜ່າຕັດຂອງທ່ານ.*

- ຖ້າທ່ານຮ້ອງຂໍການໄຕ່ສວນພິຈາລະນາທາງບໍລິຫານ ເພື່ອໃຫ້ກວດສອບການປະຕິເສດ, ໂດຍປົກກະຕິແລ້ວ ພວກເຮົາຈະຕ້ອງໄດ້ເປີດເຜີຍຂໍ້ມູນໃນຂະບວນການໄຕ່ສວນພິຈາລະນາດັ່ງກ່າວ.

**ພວກເຮົາສາມາດນຳໃຊ້ ຫຼື ແບ່ງປັນຂໍ້ມູນສຸຂະພາບຂອງທ່ານໄດ້ຄືແນວໃດອີກແດ່?** ພວກເຮົາໄດ້ຮັບອະນຸຍາດ ຫຼື ໄດ້ຮັບການກຳນົດໃຫ້ແບ່ງປັນຂໍ້ມູນຂອງທ່ານໄປໃນຊ່ອງທາງອື່ນ – ໂດຍປົກກະຕິແລ້ວ ແມ່ນໄປໃນຊ່ອງທາງທີ່ເປັນປະໂຫຍດຕໍ່ສາທາລະນະ ເຊັ່ນ: ສາທາລະນະສຸກ ແລະ ການຄົ້ນຄວ້າວິໄຈ. ພວກເຮົາຕ້ອງບັນລຸໃຫ້ໄດ້ຕາມເງື່ອນໄຂຫຼາຍຢ່າງໃນກົດໝາຍ ກ່ອນທີ່ພວກເຮົາຈະສາມາດແບ່ງປັນຂໍ້ມູນຂອງທ່ານສຳລັບຈຸດປະສົງເຫຼົ່ານີ້ໄດ້. ສຳລັບຂໍ້ມູນເພີ່ມຕື່ມ, ໃຫ້ເບິ່ງ:
**hhs.gov/hipaa/for-individuals/guidance-materials-for-consumers/index.html**

**ຊ່ວຍໃນເລື່ອງບັນຫາສຸຂະພາບ ແລະ ສາທາລະນະສຸກ**

- ພວກເຮົາສາມາດແບ່ງປັນຂໍ້ມູນສຸຂະພາບກ່ຽວກັບທ່ານ ສຳລັບສະຖານະການບາງຢ່າງ ເຊັ່ນ:
- ການປ້ອງກັນພະຍາດ.
- ການຊ່ວຍເຫຼືອໃນການຮຽກຄືນຜະລິດຕະພັນ.
- ການລາຍງານຕິກິລິຍາທາງລົບຕໍ່ຢາ.
- ການລາຍງານການລ່ວງລະເມີດ, ການລະເລີຍ ຫຼື ການນຳໃຊ້ຄວາມຮຸນແຮງໃນຄອບຄົວທີ່ໜ້າສົງໄສ.
- ການປ້ອງກັນ ຫຼື ການຫຼຸດຜ່ອນໄພຂົ່ມຂູ່ທີ່ຮ້າຍແຮງຕໍ່ສຸຂະພາບ ຫຼື ຄວາມປອດໄພຂອງບຸກຄົນໃດໜຶ່ງ.

**ເຮັດການຄົ້ນຄວ້າວິໄຈ**

- ພວກເຮົາສາມາດນຳໃຊ້ ຫຼື ແບ່ງປັນຂໍ້ມູນຂອງທ່ານ ສຳລັບການຄົ້ນຄວ້າວິໄຈດ້ານສຸຂະພາບ.

**ປະຕິບັດຕາມກົດໝາຍ**

- ພວກເຮົາຈະແບ່ງປັນຂໍ້ມູນກ່ຽວກັບທ່ານ ຖ້າກົດໝາຍຂອງລັດ ຫຼື ລັດຖະບານກາງກຳນົດໄວ້, ລວມທັງການເປີດເຜີຍໃຫ້ແກ່ Department of Health and Human Services (ພະແນກສາທາລະນະສຸກ ແລະ ການບໍລິການມະນຸດ) ຖ້າພະແນກຕ້ອງການກວດເບິ່ງວ່າພວກເຮົາປະຕິບັດຕາມກົດໝາຍວ່າດ້ວຍຄວາມເປັນສ່ວນຕົວຂອງລັດຖະບານກາງ ຫຼື ບໍ່.

**ຕອບສະໜອງຕໍ່ການຮ້ອງຂໍບໍລິຈາກອະໄວຍະວະ ແລະ ເນື້ອເຍື່ອ ແລະ ເຮັດວຽກຮ່ວມກັບຜູ້ກວດສອບທາງການແພດ ຫຼື ຜູ້ອຳນວຍການຈັດງານສົບ**

- ພວກເຮົາສາມາດແບ່ງປັນຂໍ້ມູນສຸຂະພາບກ່ຽວກັບທ່ານກັບອົງກອນຈັດຊື້ອະໄວຍະວະໄດ້.
- ພວກເຮົາສາມາດແບ່ງປັນຂໍ້ມູນສຸຂະພາບກັບເຈົ້າໜ້າທີ່ຊັນນະສູດຊາກສົບ, ຜູ້ກວດສອບທາງການແພດ ຫຼື ຜູ້ອຳນວຍການຈັດງານສົບໃນເວລາທີ່ບຸກຄົນໃດໜຶ່ງເສຍຊີວິດ.

**ແກ້ໄຂຄ່າຊົດເຊີຍຜູ້ອອກແຮງງານ, ການບັງຄັບໃຊ້ກົດໝາຍ ແລະ ຄຳຮ້ອງຂໍຂອງລັດຖະບານອື່ນໆ**

- ພວກເຮົາສາມາດນຳໃຊ້ ຫຼື ແບ່ງປັນຂໍ້ມູນສຸຂະພາບກ່ຽວກັບທ່ານ:
    - ສຳລັບການຮຽກທວງຄ່າຊົດເຊີຍພະນັກງານ.
    - ສຳລັບຈຸດປະສົງໃນການບັງຄັບໃຊ້ກົດໝາຍ ຫຼື ກັບເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ.
    - ກັບໜ່ວຍງານຄວບຄຸມດູແລສຸຂະພາບ ສຳລັບກິດຈະກຳທີ່ໄດ້ຮັບອະນຸຍາດໂດຍກົດໝາຍ.
    - ສຳລັບໜ້າທີ່ພິເສດຂອງລັດຖະບານ ເຊັ່ນ: ທະຫານ, ຄວາມປອດໄພຂອງຊາດ ແລະ ການບໍລິການປ້ອງກັນປະທານາທິບໍດີ.

**ຕອບສະໜອງຕໍ່ການດຳເນີນຄະດີ ແລະ ການດຳເນີນການທາງກົດໝາຍ**

- ພວກເຮົາສາມາດແບ່ງປັນຂໍ້ມູນສຸຂະພາບກ່ຽວກັບທ່ານ ເພື່ອເປັນການຕອບສະໜອງຕໍ່ຄຳສັ່ງຂອງສານ ຫຼື ຄຳສັ່ງທາງບໍລິຫານ ຫຼື ໃນການຕອບສະໜອງຕໍ່ໝາຍຮຽກ.

**ມີປະເພດຂໍ້ມູນທີ່ໄດ້ຮັບການປົກປ້ອງພິເສດບໍ?**

ແມ່ນ, ຂໍ້ມູນບາງປະເພດຈະໄດ້ຮັບການປົກປ້ອງຫຼາຍກວ່າພາຍໃຕ້ກົດໝາຍຂອງລັດ Washington ຫຼື ລັດຖະບານກາງ. ແນວທາງປະຕິບັດກ່ຽວກັບການເປີດເຜີຍຂ້າງເທິງນີ້ ບໍ່ຈຳເປັນຕ້ອງນຳໃຊ້ກັບປະເພດຂໍ້ມູນທີ່ໄດ້ຮັບການປົກປ້ອງພິເສດ, ເຊິ່ງໄດ້ແກ່:

- ຂໍ້ມູນທີ່ກ່ຽວກັບພະຍາດ HIV ທີ່ເປັນຄວາມລັບ ທີ່ໄດ້ຮັບການປົກປ້ອງໂດຍກົດໝາຍຂອງລັດ Washington.
- ຂໍ້ມູນການປິ່ນປົວພາວະຜິດປົກກະຕິຈາກການນຳໃຊ້ເຫຼົ້າ ແລະ ສານເສບຕິດໄດ້ຮັບການປົກປ້ອງພາຍໃຕ້ທັງກົດໝາຍຂອງລັດ Washington ແລະ ລັດຖະບານກາງ.
- ຂໍ້ມູນການປິ່ນປົວສຸຂະພາບຈິດໄດ້ຮັບການປົກປ້ອງພາຍໃຕ້ທັງກົດໝາຍຂອງລັດ Washington ແລະ ລັດຖະບານກາງ.

## 7 ຄວາມຮັບຜິດຊອບຂອງພວກເຮົາ

- ກົດໝາຍໄດ້ກຳນົດໃຫ້ພວກເຮົາຕ້ອງຮັກສາຄວາມເປັນສ່ວນຕົວ ແລະ ຄວາມປອດໄພຂອງ protected health information (ຂໍ້ມູນສຸຂະພາບທີ່ໄດ້ຮັບການປົກປ້ອງ) ຂອງທ່ານ.
- ພວກເຮົາຈະແຈ້ງໃຫ້ທ່ານຊາບທັນທີ ຖ້າຫາກວ່າມີການລະເມີດເກີດຂຶ້ນ ທີ່ອາດຈະສົ່ງຜົນກະທົບຕໍ່ຄວາມເປັນສ່ວນຕົວ ຫຼື ຄວາມປອດໄພຂອງຂໍ້ມູນຂອງທ່ານ.
- ພວກເຮົາຕ້ອງປະຕິບັດຕາມໜ້າທີ່ ແລະ ແນວທາງປະຕິບັດວ່າດ້ວຍຄວາມເປັນສ່ວນຕົວ ທີ່ໄດ້ອະທິບາຍໄວ້ໃນແຈ້ງການສະບັບນີ້ ແລະ ໃຫ້ສຳເນົາຂອງແຈ້ງການແກ່ທ່ານ ຖ້າຫາກທ່ານຮ້ອງຂໍ.
- ພວກເຮົາຈະບໍ່ນຳໃຊ້ ຫຼື ແບ່ງປັນຂໍ້ມູນຂອງທ່ານ ນອກເໜືອໄປຈາກທີ່ໄດ້ອະທິບາຍໄວ້ໃນນີ້ ເວັ້ນເສຍແຕ່ທ່ານຈະບອກພວກເຮົາວ່າພວກເຮົາສາມາດເຮັດໄດ້ ເປັນລາຍລັກອັກສອນເທົ່ານັ້ນ. ຖ້າທ່ານບອກພວກເຮົາວ່າພວກເຮົາສາມາດເຮັດໄດ້, ທ່ານສາມາດຈະປ່ຽນໃຈໄດ້ທຸກເວລາ. ແຈ້ງໃຫ້ພວກເຮົາຮູ້ເປັນລາຍລັກອັກສອນ ຖ້າທ່ານປ່ຽນໃຈຂອງທ່ານ.

ສຳລັບຂໍ້ມູນເພີ່ມຕື່ມ ໃຫ້ເບິ່ງເວັບໄຊຂອງລັດຖະບານກາງນີ້: **hhs.gov/hipaa/for-individuals/notice-privacy-practices/index.html**.

**ການປ່ຽນແປງຂໍກຳນົດຂອງແຈ້ງການສະບັບນີ້**

ພວກເຮົາສາມາດປ່ຽນແປງຂໍ້ກຳນົດຂອງການແຈ້ງການສະບັບນີ້ໄດ້ ແລະ ການປ່ຽນແປງຈະມີຜົນບັງຄັບໃຊ້ກັບຂໍ້ມູນທັງໝົດທີ່ພວກເຮົາມີກ່ຽວກັບທ່ານ. ພວກເຮົາຈະສົ່ງແຈ້ງການສະບັບໃໝ່ໃຫ້ທ່ານ ຫຼື ບອກທ່ານກ່ຽວກັບແຈ້ງການນັ້ນ ແລະ ວິທີຂໍສະບັບສຳເນົາ. ແຈ້ງການສະບັບປັບປຸງຈະມີຢູ່ໃນເວັບໄຊຂອງພວກເຮົາ ແລະ ພວກເຮົາຈະສົ່ງອີເມວ ຫຼື ສົ່ງສຳເນົາໃຫ້ທ່ານທາງໄປສະນີຕາມການຮ້ອງຂໍ. ແຈ້ງການສະບັບນີ້ມີເປັນຫຼາຍພາສາ; ກວດເບິ່ງເວັບໄຊຂອງພວກເຮົາທີ່ **www.hca.wa.gov/pages/privacy.aspx**.